# I. ພາກສະເໜີ

ໂດຍການສະໜັບສະໜູນຈາກໂຄງການຈັດຕັ້ງປະຕິບັດການຄຸ້ມຄອງປ່າໄມ້ແບບພູມີທັດ ແລະ ສົ່ງເສີມຊີວິດການເປັນຢູ່ (ຈ-ຄປຊ), ອີງການຈັດຕັ້ງທີ່ກ່ຽວຂ້ອງ ຊຶ່ງປະກອບດ້ວຍ ຫ້ອງການກະສິກໍາ ແລະ ປ່າໄມ້, ຫ້ອງການຊັບ ພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໂດຍປະສານສົມທົບຕິດຕາມ ສະໜັບສະໜູນດ້ານວິຊາການກັບພະແນກກະສິກໍາ - ປ່າໄມ້ແຂວງ ແລະ ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແຂວງ ໄດ້ຈັດຕັ້ງປະຕິ ບັດວຽກງານວາງແຜນນໍາໃຊ້ທີ່ດິນແບບມີສ່ວນຮ່ວມຂັ້ນບ້ານ(PLUP2.0) ຢູ່ຂອບເຂດບ້ານເປົ້າໝາຍຂອງໂຄງການ

ການວາງແຜນນໍາໃຊ້ທີ່ດິນແບບມີສ່ວນຮ່ວມຂັ້ນບ້ານ ແມ່ນໄດ້ຍຶດຖືເອົາການມີສ່ວນຮ່ວມຂອງທ້ອງຖິ່ນ ກໍ່ຄືບັນດາຫ້ອງການກ່ຽວຂ້ອງທຸກພາກສ່ວນ ຕະຫລອດເຖິງອໍານາດການປົກຄອງບ້ານ, ອົງການຈັດຕັ້ງບ້ານທີ່ມີທັງຍິງ-ຊາຍ, ຊົນຊາດຊົນເຜົ່າ ແລະ ທຸກຖານະຊົນຊັ້ນເຂົ້າຮ່ວມ ໃນການຄົ້ນຄວ້າ-ປຶກສາຫາລື ແລະ ຕັດສິນໃຈ ຮ່ວມກັບທີມງານວິຊາການ ໃນການສ້າງແຜນຈັດສັນຄຸ້ມຄອງນໍາໃຊ້ທີ່ດິນແບບມີສ່ວນຮ່ວມຂັ້ນບ້ານ ຮ່ວມກັນ.

ໂດຍອີງໃສ່ຫຼັກການພື້ນຖານຕ່າງໆຢູ່ໃນ ຄູ່ມືການວາງແຜນການນໍາໃຊ້ທີ່ດິນແບບມີສ່ວນຮ່ວມຂັ້ນບ້ານ ແລະກຸ່ມບ້ານພັດທະນາທີ່ຖືກຮັບຮອງໂດຍ ກະຊວງກະສິກໍາ ແລະ ປ່າໄມ້ ແລະ ອົງການຄຸ້ມຄອງທີ່ດິນແຫ່ງຊາດ (ໃນເມື່ອກ່ອນ) ປະກອບກັບບາງຂັ້ນຕອນເພີ່ມຕື່ມ ເພື່ອເຮັດໃຫ້ສອດຄ່ອງກັບມາດຕາການປົກປ້ອງຕ່າງໆ ແລະແຜນດໍາເນີນງານບົດບາດຍິງຊາຍຂອງໂຄງການ ຈ-ຄປຊ, ການວາງແຜນນໍາໃຊ້ທີ່ດິນແບບມີສ່ວນຮ່ວມຂັ້ນບ້ານ (PLUP2.0) ປະກອບດ້ວຍຂັ້ນຕອນດັ່ງລຸ່ມນີ້: ເຊິ່ງໄດ້ຈັດຕັ້ງປະຕິບັດໃນການລົງພາກສະໜາມຄັ້ງດຽວ ໂດຍໃຊ້ເວລາ 7 ວັນ.

ຂັ້ນຕອນ1: ການກະກຽມ
ຂັ້ນຕອນ 2: ເປີດກອງປະຊຸມຂັ້ນບ້ານ ຄັ້ງທໍາອິດ
ຂັ້ນຕອນ3: ການເກັບກໍາຂໍ້ມູນທາງດ້ານເສດຖະກິດ-ສັງຄົມ, ການນ□າໃຊ້ທີ່ດິນ ແລະ ປ່າໄມ້
ຂັ້ນຕອນ4: ການສ້າງແຜນທີ່ການນໍາໃຊ້ທີ່ດິນປະຈຸບັນ(CLUFC)
ຂັ້ນຕອນ5: ການສ້າງແຜນຈັດສັນຄຸ້ມຄອງການນໍາໃຊ້ທີ່ດິນ(FLUMZ)
ຂັ້ນຕອນ6: ການສ້າງກົດລະບຽບຂອງບ້ານ
ຂັ້ນຕອນ7: ກອງປະຊຸມປິດ, ການຂຽນບົດລາຍງານ, ການອະນຸມັດ ແລະ ການເກັບມ້ຽນຂໍ້ມູນ
ຂັ້ນຕອນ8: ການເຊື່ອມໂຍງເຂົ້າກັບວຽກງານສົ່ງເສີມກະສິກໍາແບບຍືນຍົງທີ່ບໍ່ທໍາລາຍປ່າໄມ້ (PSAP) ແລະ ການສ້າງແຜນຄຸ້ມຄອງປ່າໄມ້ບ້ານ (VFMP)
ຂັ້ນຕອນ9: ການຕິດຕາມກວດກາ ແລະ ປະເມີນຜົນ

**ຕາຕະລາງ01: ເວລາການຈັດຕັ້ງປະຕິບັດວຽກງານແຕ່ລະຂັ້ນຕອນ**

| ມື້ | ໜ້າວຽກ |
|---|---|
| 1 | ກອງປະຊຸມເປີດເພື່ອນໍາສະເໜີທີມງານແລະ ຈຸດປະສົງຂອງຂະບວນການPLUP2.0 ການຄັດເລືອກຄະນະກໍາມະການຄຸ້ມຄອງທີ່ດິນຂັ້ນບ້ານVLFMC |
| 2 | ການກໍານົດຂອບເຂດຄຸ້ມຄອງລະຫວ່າງບ້ານຕໍ່ບ້ານ, ຈັບຈຸດພິກັດ GPS ຂອບເຂດບ້ານສ້າງບົດບັນທຶກເຂດຄຸ້ມຄອງລະຫວ່າງບ້ານຕໍ່ບ້ານ |
| 3 | ການເກັບກໍາຂໍ້ມູນເສດຖະກິດ-ສັງຄົມ ທີ່ດິນ ແລະ ປ່າໄມ້ ໂດຍການສົນທະນາເປັນກຸ່ມ (ກຸ່ມຍິງ-ຊາຍ ຫຼື ຊົນເຜົ່າ)ການວິເຄາະຂໍ້ມູນ, ສະຫຼຸບສັງລວມຂໍ້ມູນເສດຖະກິດ-ສັງຄົມ ທີ່ດິນ ແລະ ປ່າໄມ້ |
| 4 | ສ້າງແຜນທີ່ການນໍາໃຊ້ທີ່ດິນປັດຈຸບັນຂອງບ້ານ(CLUFC) |
| 5 | ການສ້າງແຜນທີ່ແຜນຈັດສັນຄຸ້ມຄອງການນໍາໃຊ້ທີ່ດິນ ແລະ ປ່າໄມ້ຂອງບ້ານ (FLUMZ) |
| 6 | ສ້າງກົດລະບຽບຂອງບ້ານການຜ່ານແຜນຈັດສັນຄຸ້ມຄອງຮ່ວມກັບປະຊາຊົນ |
| 7 | ກອງປະຊຸມປິດເພື່ອສະຫລຸບ ແລະ ຮັບຮອງເອກະສານຕ່າງໆ |

## II. ສະພາບໂດຍທົ່ວໄປຂອງບ້ານ.

ຂໍ້ມູນຕ່າງໆ ດັ່ງລຸ່ມນີ້ ແມ່ນໄດ້ຈາກ ການເກັບກຳຂໍ້ມູນຂອງທີມງານວິຊາການ ໂດຍການສຳພາດເປັນກຸ່ມ ເຊິ່ງແບ່ງຕາມ ເພດຍິງ-ຊາຍ. ການສຳພາດດັ່ງກ່າວ ມີປະຊາຊົນບ້ານເມືອງປານ ເຂົ້າຮ່ວມທັງໝົດ 43 ຄົນ ເຊິ່ງແຕ່ລະກຸ່ມ ຈັດຂຶ້ນບໍ່ພ້ອມກັນ. ຂໍ້ມູນທີ່ໄດ້ຖືກເກັບກຳຈາກກຸ່ມຕ່າງໆດັ່ງກ່າວ ໄດ້ຖືກນຳມາວິເຄາະປຽບທຽບໂດຍທີມງານວິຊາການ ແລະ ໃນກໍລະນີ ຖ້າພົບເຫັນ ຄຳເຫັນ ຫຼື ຄຳຕອບທີ່ບໍ່ກົງກັນ ລະຫວ່າງກຸ່ມຕ່າງໆ ທີມງານຈະໄດ້ມີການສອບຖາມ ແລະ ສຳພາດເພີ່ມຕື່ມ ເຖິງ ເຫດຜົນ ຂອງຄວາມແຕກຕ່າງດັ່ງກ່າວ.

ປະຫວັດຄວາມເປັນມາຂອງບ້ານ ຊຽງແກນ ທຳອິດແມ່ນ ທ້າວ ຊຽງແກນ ເດີນທາງມາແຕ່ເມືອງຫຼວງພະບາງ ໄດ້ປະມານປີ 1400 ມາແລ້ວ ມາຕັ້ງຖິ່ນຖານຢູ່ເຂດນີ້ແລ້ວລາວໄດ້ສ້າງບ້ານແປງເມືອງ ຈົນມີພະທາດເຈລີຢູ່ຫຼາຍແຫ່ງ ເປັນຕົ້ນແມ່ນລາວໄດ້ສ້າງພະທາດບ້ານເມືອງປົວ, ພະທາດບ້ານປຸງ ແລະ ພະທາດບ້ານຕອງ ເມື່ອສ້າງສຳເລັດແລ້ວ ຈຶ່ງຈະກວດເບິ່ງວ່າພະທາດບ່ອນໃດງາມກ່ອນໝູ່ ແມ່ນຈະເອົາພະທາດນັ້ນມາເປັນແບບຢ່າງທີ່ຈະສ້າງຂຶ້ນຢູ່ທີ່ບ້ານລາວຢູ່ໃນເວລານັ້ນ ຕໍ່ມາ ທ້າວ ຊຽງແກນ ກໍ່ໄດ້ສິ້ນພະຊົນໄປກ່ອນ ເວລາຜ່ານໄປຫຼາຍສັດຕະວັດ ມີຂ້າເສິກເຂົ້າມາປຸ້ນສະດົມຫຼາຍຄັ້ງຫຼາຍຄາວ ແລະ ກໍ່ມີຫຼາຍຊົນເຜົ່າເຂົ້າມາຕັ້ງຖິ່ນຖານຢູ່ທີ່ນີ້ແລ້ວກໍ່ຍົກຍ້າຍໄປບ່ອນອື່ນ ຊົນຈເຜົ່າໄທແດງ ເປັນຊົນເຜົ່າຊຸດທ້າຍກໍ່ໄດ້ເດີນທາງມາແຕ່ດົນຫວຽດ ມາໄດ້ 3-4 ເຊັ່ນຄົນ ແລ້ວຈຶ່ງໃສ່ຊື່ຜູ້ທີ່ມາຢູ່ແຕ່ທຳອິດຊື່ວ່າ ບ້ານ ຊຽງແກນ ເທົ່າປະຈຸບັນນີ້.

### 2.1 ພາສາ, ພົນລະເມືອງ ແລະ ການປ່ຽແປງຂອງພົນລະເມືອງ

ພາສາຕ່າງໆທີ່ນຳໃຊ້ໃນບ້ານແມ່ນພາສາລາວ, ມີພົນລະເມືອງທັງໝົດ 186 ຄົນ, ຍິງ 96 ຄົນ, ມີ 43 ຄອບຄົວ, ມີ 34 ຫຼັງຄາເຮືອນ ການປ່ຽນແປງຂອງພົນລະເມືອງໃນໄລຍະ 5 ປີ ແມ່ນ 25%, ການເພີ່ມຂຶ້ນສະເລ່ຍຕໍ່ປີ ແມ່ນ 5% ຫຼື ເທົ່າກັບ 10 ຄົນ, ຄວນເພີ່ມ ຕາຕະລາງຄິດໄລ່ການປ່ຽນແປງຂອງພົນລະເມືອງໃສ່ຂໍ້ນີ້:

**ຕາຕະລາງ01: ການເພີ່ມຂຶ້ນ ແລະ ລຸດລົງຂອງປະຊາກອນພາຍໃນບ້ານປີ 2016–2021**

| ປີ | ຈຳນວນ ພົນລະເມືອງ ທັງໝົດ | ການ ເກີດ | ການຕາຍ | ການຍົກ ຍ້າຍເຂົ້າ | ການຍົກ ຍ້າຍອອກ | ປ່ຽນແປງຂອງ ພົນລະເມືອງ | ອັດຕາການເພີ່ມຂຶ້ນ/ ປ່ຽນແປງໃນແຕ່ລະປີ (%) |
|---|---|---|---|---|---|---|---|
| 2021 | 198 | | | | | | |
| 2020 | 193 | 8 | 2 | 0 | 1 | +5 | 3% |
| 2019 | 189 | 4 | 2 | 4 | 2 | +4 | 2% |
| 2018 | 176 | 10 | 1 | 4 | 0 | +13 | 7% |
| 2017 | 166 | 8 | 1 | 3 | 0 | +10 | 6% |
| 2016 | 159 | 7 | 2 | 2 | 0 | +7 | 4% |
| | | | | ການເພີ່ມຂຶ້ນທັງໝົດໃນໄລຍະ 5 ເປັນ % | | | **25%** |
| | | | | ການເພີ່ມຂຶ້ນສະເລ່ຍຕໍ່ປີ % | | | **5%** |

### 2.2 ແຫຼ່ງລາຍຮັບ ແລະ ທ່າແຮງຂອງບ້ານ

ແຫຼ່ງລາຍຮັບຕົ້ນຕໍແມ່ນ ການປູກຝັງ (ເຮັດນາ), ລ້ຽງສັດ, ຕໍ່າຫູກ, ຄ້າ - ຂາຍ ແລະ ທ່າແຮງພາຍໃນບ້ານ

ແມ່ນ ມີພື້ນທີ່ນາ ເນື້ອທີ່ ປະມານ 30.72 ຮຕ, ສະເລ່ຍແມ່ນມີເຂົ້າກຸ້ມກິນພາຍໃນບ້ານ, ຍັງມີປ່າໄມ້ຫຼາຍໃນການທຳມາຫາກິນແບບທຳມະຊາດ ເຊັ່ນ: ໜໍ່ໄມ້, ເຄື່ອງປ່າຂອງດົງ, ສັດປ່າ (ໝູ,ນົກ ກະຮອກ...). ນອກນີ້ພາຍໃນບ້ານຍັງເດັ່ນໃນການຕ່ຳຫູກທໍ່ໄໝ ຂາຍເປັນສິນຄ້າ ເຊິ່ງສາມາດສ້າງລາຍຮັບໃຫ້ຄອບຄົວ.

### 2.3 ສຳມະໂນບັນຫາ ແລະ ການຈັດບູລິມະສິດການແກ້ໄຂ.

ຈາກການສຳພາດ ປະຊາຊົນພາຍໃນບ້ານ ກຸ່ມຍິງກຸ່ມຊາຍ ປະຊາຊົນເຫັນວ່າ ພາຍໃນບ້ານຂອງຕົນ ມີບັນຫາຕ່າງໆ ແລະ ສະເໜີວິທີທາງແກ້ໄຂຕ່າງໆ ດັ່ງຕໍ່ໄປນີ້:

**ຕາຕະລາງ02: ສາມະໂນບັນຫາ ແລະ ການຈັດບູລິມະສິດການແກ້ໄຂ.**

| ລ/ດ | ບັນຫາ | ສາເຫດ | ຜົນກະທົບ | ຂໍ້ສະເໜີທາງແກ້ໄຂ |
|---|---|---|---|---|
| 1 | ເສັ້ນທາງໄປມາບໍ່ສະດວກ | ທາງບໍ່ດີ | ທຽວໄດ້ລະດູດຽວ | - ສະເໜີຂັ້ນເທິງ ຊອກງົບປະມານມາແປງທາງໃຫ້, ປູຢາງ |
| 2 | ນ້ຳຖວມ, ດິນເຊະເຈືອນ | ຄັງເສັ້ນທາງ, ການຖາງປ່າເຮັດໄຮ່ຈາກບ້ານອ້ອມຂ້າງ | ຜົນຜະລິດ ຖືກເສຍຫາຍ | - ຢຸດເຊົາການຖາງປ່າຊະຊາຍ<br>- ສ້າງທ້ອງລະບາຍຖາວອນ |

❖ **ປະຫວັດການວາງແຜນການນຳໃຊ້ທີ່ດິນຜ່ານມາພາຍໃນບ້ານ**

ໃນປີ 2012 ຂະແໜງ ຄຸ້ມຄອງທີ່ດິນກະສິກຳ ພະແນກກະສິກຳ ແລະ ປ່າໄມ້, ພະແນກຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ຫົວພັນ ໄດ້ລົງມາສົມທົບ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ວຽງໄຊ, ຫ້ອງການ ຊສມ ໄດ້ລົງຈັດຕັ້ງປະຕິບັດກິດຈະກຳ ວຽກງານການວາງແຜນການນຳໃຊ້ທີ່ດິນ ແບບມີສ່ວນຮ່ວມຂັ້ນບ້ານ ຢູ່ບ້ານ ຊຽງແກນ ໂດຍໄດ້ຮັບທຶນສະໜັບສະໜູນຈາກໂຄງການ (GIZ) ເນື່ອງຈາກວ່າ ແຜນການນຳໃຊ້ທີ່ດິນທີ່ຜ່ານມາດັ່ງກ່າວ ແມ່ນເກົ່າ ແລະ ບໍ່ເໝາະສົມກັບສະພາບຕົວຈິງໃນປະຈຸບັນ ອຳນາດການປົກຄອງບ້ານ ຊຽງແກນ ພ້ອມດ້ວຍປະຊາຊົນພາຍໃນບ້ານ ຈຶ່ງສະເໜີໃຫ້ ມີການຈັດສັນທີ່ດິນ ແລະ ປ່າໄມ້ ບາງຈຸດຄືນໃໝ່ ເພື່ອໃຫ້ສອດຄ່ອງ ແລະ ເໝາະສົມກັບສະພາບຕົວຈິງໃນປະຈຸບັນ.

### 2.4 ດ້ານກະສິກາ

ຈາກຂໍ້ມູນທີ່ໄດ້ເກັບກຳຈາກການສ□າພາດ ກຸ່ມຕ່າງໆເຫັນວ່າ ປະຊາຊົນພາຍໃນບ້ານ ຊຽງແກນ ໄດ້ຢຸດຕິການຖາງປ່າເຮັດໄຮ່ ມາໄດ້ຫຼາຍສິບປີແລ້ວເນື່ອງຈາກວ່າ ບ້ານ ຊຽງແກນ ປະຊາຊົນພາຍໃນບ້ານສ່ວນຫຼາຍ ອີງໃສ່ການເຮັດກະສິກຳທີ່ມີລັກສະນະຄົງທີ່ ໂດຍສະເພາະແມ່ນການປູກຝັງ, ການເຮັດນາ, ການເຮັດສວນປູກໄມ້ (ໝາກເກົ່າ), ສວນປູກຫຍ້າລ້ຽງສັດ, ຕ່ຳຫູກທໍ້ໄໝ, ລ້ຽງສັດໃຫຍ່ ແລະ ເກັບກູ້ເຄື່ອງປ່າຂອງດົງຕາມລະດູການ.

### 2.5 ກະສິກຳຄົງທີ່:

ການເຮັດກະສິກຳແບບຄົງທີ່ສ່ວນຫຼາຍ ແມ່ນອີງໃສ່ການເຮັດນາປີ ເຊິ່ງປະກອບມີ 34 ຫຼັງຄາເຮືອນທີ່ມີນາເປັນຂອງຕົນເອງ, ຈາກຂໍ້ມູນການສຳພາດ ປະຊາຊົນໄດ້ໃຫ້ທັດສະນະວ່າເນື້ອທີ່ນາຢູ່ພາຍໃນບ້ານມີທ່າອ່ຽງຫຼຸດລົງໃນໄລຍະ 5 ປີຜ່ານມາ ໂດຍສາເຫດຕົ້ນຕໍແມ່ນ ມາຈາກການຂະຫຍາຍເສັ້ນທາງພາຍໃນບ້ານ ນອກຈາກນີ້, ພາຍໃນບ້ານກໍຍັງມີຄອບຄົວຈຳນວນໜຶ່ງທີ່ປູກໝາກເກົ່າ ປະມານ 12 ຮຕ ແລະ ປູກຫຍ້າລ້ຽງສັດ ປະມານ 9 ຮຕ (ເນື້ອທີ່ອີງຕາມການສຳພາດ).

- **ການລ້ຽງສັດໃຫຍ່:**

ພາຍໃນບ້ານ ມີງົວທັງໝົດ 150 ໂຕ, ຄວາຍ 36 ໂຕ. ການລ້ຽງສັດໃຫ່ຍໃນໄລຍະຜ່ານມາແມ່ນຍັງປ່ອຍຕາມ ທຳມະຊາດ.

**2.6 ດ້ານປ່າໄມ້**

ຈາກຂໍ້ມູນການສໍາພາດຈາກກຸ່ມຕ່າງໆ, ປະຊາຊົນສ່ວນຫຼາຍເຫັນວ່າ ສະພາບຂອງປ່າໄມ້ໂດຍທົ່ວໄປພາຍໃນບ້ານຖ້າທຽບໃສ່ສິບປີກ່ອນ ແມ່ນມີທ່າອ່ຽງດີຂຶ້ນ ເນື່ອງຈາກວ່າ ໃນປີ 2012 ປະຊາຊົນທັງໝົດພາຍໃນບ້ານໄດ້ຢຸດຕິ ການຖາງປ່າເຮັດໄຮ່ຢ່າງເປັນເອກະພາບກັນພາຍໃນບ້ານ ປະກອບມີເຂດປ່າດົງດິບໜາອຸດົມສົມບູນຫຼາຍເຂດເປັນຕົ້ນແມ່ນ ເຂດຫ້ວຍຕ່າເໜືອ, ເຂດປອມເລົ້ານ້ອຍ, ເຂດປອມກຸບ, ເຂດແກ່ວກັງຄາ, ເຂດປ້ອມຮໍາ.

ການນໍາໃຊ້ໄມ້ເພື່ອມານ□າໃຊ້ໃນຊີວິດປະຈ□າວັນຂອງປະຊາຊົນ ເປັນຕົ້ນແມ່ນ ເພື່ອມາສ້າງເຮືອນ, ເຮັດຮົ້ວ, ໄມ້ຟືນ, ເກັບກູ້ເຄື່ອງປ່າຂອງດົງ, ເກັບຜັກຫັກໜໍ່ຕ່າງໆ ຜ່ານມາແມ່ນບໍ່ໄດ້ມີການກໍານົດຢ່າງຕາຍຕົວປະຊາຊົນພາຍໃນບ້ານສາມາດນໍາໃຊ້ໄມ້ໄດ້ໃນເຂດປ່າຊົມໃຊ້ຂອງບ້ານ ຫຼື ແຄມໄຮ່ແຄມນາ ໂດຍສະເພາະການເກັບກູ້ໜໍ່ໄມ້ຊະນິດຕ່າງໆ ໃນເຂດທີ່ມີຫຼາຍເປັນພິເສດແມ່ນຢູ່ ເຂດນາເລົ້າ, ເຂດລ້ອງກໍາຕັງ, ເຂດປອມຝຮັ່ງ.

**2.7 ການນໍາໃຊ້ເຄື່ອງປ່າຂອງດົງ ແລະ ສັດປ່າ:**

**ຕາຕະລາງ03: ການນໍາໃຊ້ເຄື່ອງປ່າຂອງດົງ ແລະ ສັດປ່າ:**

<table>
<tr><td colspan="2">ຊື່ຂອງເຄື່ອງປ່າຂອງດົງ</td><td>ໄລຍະເວລາ ເດືອນ</td><td>(ສະຖານທີ່ເກັບເຄື່ອງປ່າຂອງດົງ)</td><td>ເຄື່ອງປ່າຂອງດົງໃດແດ່ທີ່ຫາຍາກຂຶ້ນ?</td><td>ເຄື່ອງປ່າຂອງດົງໃດແດ່ທີ່ສາມາດຂາຍເປັນສິນຄ້າ?</td></tr>
<tr><td>1</td><td>ເຫັດກໍ່າແດງ</td><td>5-9</td><td>ທົ່ວໄປ</td><td></td><td>✓</td></tr>
<tr><td>2</td><td>ໝາກໂປ່ງເປ່ງ</td><td>1-2</td><td>ທົ່ວໄປ</td><td></td><td>✓</td></tr>
<tr><td>3</td><td>ໝາກສາມສິບ</td><td>1-2</td><td>ທົ່ວໄປ</td><td></td><td>✓</td></tr>
<tr><td>4</td><td>ມັນແກບ</td><td>11-02</td><td>ທົ່ວໄປ</td><td></td><td>✓</td></tr>
<tr><td>5</td><td>ໝາກຫວານໃຈ</td><td>1-2</td><td>ທົ່ວໄປ</td><td></td><td>✓</td></tr>
<tr><td rowspan="7">ຈໍານວນຂອງຄອບຄົວພາຍໃນບ້ານທີ່ມີການລ່າສັດ (ໂດຍປະມານ):</td><td rowspan="7">ລ່າເພື່ອກິນ</td><td rowspan="7">ສັດປ່າດັ່ງກ່າວສາມາດພົບເຫັນຢູ່ເຂດໃດແດ່ (ບອກຊື່ສັດປ່າ ແລະສະ ຖານທີ່)</td><td>ຊື່ສັດປ່າ</td><td colspan="2">ສະຖານທີ່</td></tr>
<tr><td>ໜູ</td><td colspan="2">ທົ່ວໄປ</td></tr>
<tr><td>ໄນ</td><td colspan="2">ທົ່ວໄປ</td></tr>
<tr><td>ນົກ</td><td colspan="2">ທົ່ວໄປ</td></tr>
<tr><td>ໝູປ່າ</td><td colspan="2">ທົ່ວໄປ</td></tr>
<tr><td>ໄກ່ປ່າ</td><td colspan="2">ທົ່ວໄປ</td></tr>
<tr><td>ນົກຂໍ</td><td colspan="2">ທົ່ວໄປ</td></tr>
</table>

## III. ຄະນະກໍາມະການຄຸ້ມຄອງການນໍາໃຊ້ທີ່ດິນ ແລະ ປ່າໄມ້ຂັ້ນບ້ານ.

ຄະນະກໍາມະການຄຸ້ມຄອງການນໍາໃຊ້ທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ຂອງບ້ານ ຊຽງແກນ ແມ່ນໄດ້ຖືກຄັດເລືອກ ໃນລະຫວ່າງກອງປະຊຸມເປີດການຈັດຕັ້ງປະຕິບັດການວາງແຜນການນໍາໃຊ້ທີ່ດິນ ແບບມີສ່ວນຮ່ວມຂັ້ນບ້ານ ຄັ້ງວັນທີ 2 ກັນຍາ 2021ໂດຍ ມີ ທ່ານ ຮອງເຈົ້າເມືອງເມືອງວຽງໄຊ ເປັນປະທານ ກ່ອນຂັ້ນຕອນການຄັດເລືອກເອົາຄະນະກໍາມະການດັ່ງກ່າວນີ້, ທີມງານວິຊາການໄດ້ມີການເຜີຍແຜ່ເງື່ອນໄຂ ແລະ ມາດຕະຖານຕ່າງໆ ພ້ອມດ້ວຍໄດ້ມີການອະທິບາຍເຜີຍແຜ່ ພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຕ່າງໆຂອງຄະນະກໍາມະການຄຸ້ມຄອງການນໍາໃຊ້ທີ່ດິນ ແລະ ປ່າໄມ້ຂັ້ນບ້ານ.ຄະນະດັ່ງກ່າວ ໄດ້ຖືກຄັດເລືອກ ໂດຍພື້ນຖານ ການຄົ້ນຄວ້າສົນທະນາ

ແລະ ການເຫັນດີເປັນເອກະພາບເປັນສຽງສ່ວນຫຼາຍ ຈາກຂອງອຳນາດການປົກຄອງຂອງ ບ້ານ ຊຽງແກນ ພ້ອມດ້ວຍປະຊາຊົນທີ່ໄດ້ເຂົ້າຮ່ວມ.

ຄະນະກຳມະການຄຸ້ມຄອງການນຳໃຊ້ທີ່ດິນ ແລະ ປ່າໄມ້ຂັ້ນບ້ານດັ່ງກ່າວນີ້ມີພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ໃນການເຄື່ອນໄຫວວຽກງານຕ່າງໆ ດັ່ງທີ່ໄດ້ລະບຸໄວ້ຢ່າງ

**(ລາຍລະອຽດໃນເອກະສານຊ້ອນທ້າຍ 01)**

## IV. ແຜນທີ່ ພື້ນຖານຂອງບ້ານ ແລະ ການກຳນົດຂອບເຂດຊາຍແດນຂອງບ້ານ

### a. ເປົ້າໝາຍລວມ

ເພື່ອຮູ້ເຖິງຂອບເຂດຊາຍແດນ ການຄຸ້ມຄອງລະຫວ່າງບ້ານຕໍ່ບ້ານ ທີ່ຊັດເຈນ ແລະ ເກັບກຳຂໍ້ມູນພື້ນຖານທາງດ້ານພື້ນທີ່ຕ່າງໆທີ່ຈຳເປັນ ເພື່ອຮັບໃຊ້ຂັ້ນຕ່າງໆຂອງການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມຂັ້ນບ້ານໃນຂັ້ນຕໍ່ໄປ.

### b. ແຜນທີ່ພື້ນຖານຂອງບ້ານ

ແມ່ນລາຍລະອຽດຂອງຂໍ້ມູນທາງພູມສາດ ຫຼື ພູມສັນຖານຂອງພື້ນທີ່ເຊັ່ນ: ຊື່ແມ່ນ້ຳ, ຈຸດທີ່ຕັ້ງບ້ານ, ສັນພູ, ຈອມພູ, ເສັ້ນທາງ, ຈຸດນ້ຳລິນ ແລະ ອື່ນໆ. ຂໍ້ມູນດັ່ງກ່າວລ້ວນແຕ່ເປັນຂໍ້ມູນຈຳເປັນໃນການອະທິບາຍແຜນທີ່ໃຫ້ຜູ້ເຂົ້າຮ່ວມແຕ້ມແຜນທີ່ ຫຼື ແປພາບຖ່າຍດາວທຽມ/ທາງອາກາດ ແບບມີສ່ວນຮ່ວມໃຫ້ເຂົ້າໃຈງາຍຂຶ້ນ.

**(ແຜນທີ່ ເບິ່ງຢູ່ເອກະສານຊ້ອນທ້າຍ 02)**

***ຂັ້ນຕອນແລະວິທີການເຮັດແຜນທີ່ດັ່ງກ່າວແມ່ນໄດ້ແບ່ງອອກເປັນ3ຂັ້ນຕອນຫລັກໆຄື:***

***ຂັ້ນຕອນທີ1***:*ແຕ້ມ ແລະ ໝາຍຊື່ ເສັ້ນທາງ,ແມ່ນ້ຳ,ຈອມພູ,ສັນພູແລະ ຈຸດອື່ນໆລົງໃສ່ໃນແຜນທີ່ທາງອາກາດ/ດາວທຽມ ຫລືແຜນທີ່ພູມສັນຖານຊຶ່ງວຽກດັ່ງກ່າວແມ່ນການ ເຮັດວຽກຮ່ວມກັນກັບຜູ້ເຂົ້າຮ່ວມຢູ່ບ້ານ.*

***ຂັ້ນຕອນທີ2***: *ຈາກນັ້ນ, ໃນລະຫວ່າງການລົງສຳຫລວດພື້ນທີ່ຕົວຈິງພາກສະໜາມກ່ຽວກັບຂອບເຂດຄຸ້ມຄອງຂອງບ້ານ (ສ□ຫລວດບາງຈຸດ), ບັນທຶກຈຸດຕ່າງໆທີ່ເຫັນວ່າຍັງບໍ່ທັນຊັດເຈນເພີ່ມຕື່ມ.*

***ຂັ້ນຕອນທີ3***:*ຫລັງຈາກກັບຈາກການລົງສຳຫລວດພາກສະໜາມແລ້ວ,ທາງທີມງານວິຊາການແຕ້ມແຜນທີ່(GIS) ລົງຄອມພິວເຕີ ແລະ ເກັບມ້ຽນຂໍ້ມູນໃຫ້ເປັນລະບົບ. ການເຮັດແຜນທີ່ດັ່ງກ່າວແມ່ນຈະມີການປັບປຸງຖ້າຫາກມີຂໍ້ມູນບໍ່ຖືກຕ້ອງຫລືໄດ້ຂໍ້ມູນໃໝ່ມາເພີ່ມຕື່ມ*

### c. ການກຳນົດ ແລະ ສ້າງແຜນທີ່ຂອບເຂດຄຸ້ມຄອງລະຫວ່າງບ້ານຕໍ່ບ້ານ

ການກຳນົດ ແລະ ສ້າງແຜນທີ່ຂອບເຂດຄຸ້ມຄອງລະຫວ່າງບ້ານຕໍ່ບ້ານ ແມ່ນໄດ້ອີງໃສ່ແຜນທີ່ພື້ນຖານຂອງບ້ານເປັນເຄື່ອງມືຕົ້ນຕໍໃນການເຮັດວຽກ, ຊຶ່ງຂັ້ນຕອນແມ່ນໄດ້ເລີ່ມຈາກການປຶກສາຫາລືຂອງອຳນາດການປົກຄອງບ້ານ ແລະ ຄະນະກຳມະການຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ທັງບ້ານເຈົ້າພາບ ແລະ ບ້ານອ້ອມຂ້າງ ກ່ຽວກັບລາຍລະອຽດຂອງຂອບເຂດຊາຍແດນບ້ານທັງໝົດ ໄດ້ຖືກບັນທຶກລົງໃສ່ແຜນທີ່ພື້ນຖານຂອງບ້ານ ແລະ ໄດ້ລົງສຳຫລວດພື້ນທີ່ຕົວຈິງຢູ່ພາກສະໜາມ (ຈຸດທີຍັງບໍ່ມີຄວາມຊັດເຈນ) ດ້ວຍນຳໃຊ້ເຄື່ອງກຳນົດຈຸດທີ່ຕັ້ງທາງພູມສາດ (GPS).

ໃນກໍລະນີທີ່ ບ້ານເປົ້າໝາຍຫາກມີບົດບັນທຶກຂອບເຂດຄຸ້ມຄອງລະຫວ່າງບ້ານຕໍ່ບ້ານ ຢູ່ແລ້ວມາກ່ອນ, ການປັບປຸງບົດບັນທຶກດັ່ງກ່າວ ແມ່ນອີງຕາມການຮ່ວມກັນຕັດສິນໃຈຂອງບ້ານເຈົ້າພາບ, ບ້ານອ້ອມຂ້າງ ແລະ ຄວາມຊັດເຈນຂອງບົດບັນທຶກແຜນທີ່ຂອບເຂດຊາຍແດນຂອງບ້ານໄດ້ຖືກສ້າງເປັນເອກະສານທາງນິຕິກຳທີ່ສາມາດນຳໃຊ້ໄດ້ທາງກົດໝາຍ ແລະ ແຜນທີ່ຂອບເຂດຊາຍແດນບ້ານດັ່ງກ່າວໄດ້ຖືກນຳໃຊ້ເຂົ້າໃນການເຮັດວຽກວາງແຜນການນຳໃຊ້ທີ່ດິນ ແລະ ປ່າໄມ້.

**(ແຜນທີ່ ເບິ່ງຢູ່ເອກະສານຊ້ອນທ້າຍ 03)**

ສໍາລັບບ້ານ ຊຽງແກນ ແມ່ນໄດ້ມີການກໍານົດມາກ່ອນ, ໃນລະຫວ່າງວຽກງານຈັດສັນທີ່ດິນຂອງຈຸລະພາກ ປີ 2012 ໂດຍການປຶກສາຫາລືກັນ ຂອງຜູ້ເຂົ້າຮ່ວມ ໄດ້ເຫັນວ່າບາງຄ□າເວົ້າຍັງສັ້ນໂພດ, ບາງຈຸດຍັງບໍ່ທັນລະອຽດ ແລະ ບໍ່ທັນແທດເໝາະກັບສະພາບຕົວຈິງຂອງບັນດາບ້ານອ້ອມຂ້າງທີ່ຕິດຈອດກັບບ້ານຊຽງແກນ ສະນັ້ນ ຈຶ່ງມີການປຶກ ສາຫາລື, ການລົງສໍາຫຼວດພາກສະໜາມລະຫວ່າງບ້ານຕໍ່ບ້ານຄືນບາງບ້ານທີຍັງບໍ່ທັນຈະແຈ້ງ ຊຶ່ງຈັດຂຶ້ນ ໃນຄັ້ງວັນທີ 26-27 ມີນາ 2021 ຢູ່ທີ່ ສະໂມສອນ ບ້ານ ຊຽງແກນ ແລະ ໄດ້ຕົກລົງກໍານົດຂອບເຂດຄຸ້ມຄອງລະຫວ່າງບ້ານຕໍ່ບ້ານເປັນເອກະພາບກັນບ້ານ ຊຽງແກນ ມີເຂດຄຸ້ມຄອງຕິດກັນກັບ 5 ບ້ານ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

❖ **ບ້ານ ຊຽງແກນ ທິດເໜືອ ຕິດ ບ້ານ ວັງແຊງ**

➢ ບ້ານ ຊຽງແກນ ຕິດກັບ ບ້ານ ວັງແຊງ: ເລີ່ມຈາກພູລົມ, ພູເຫຼັກແລ້ວໄຕ່ສັນພູເຫຼັກ ຕັດມາໃສ່ປ່ອງຫ້ວຍບອມຍຸງ ມີຄວາມຍາວ 4.8 ກິໂລແມັດ.

❖ ບ້ານ ຊຽງແກນ ທິດໃຕ້ ຕິດ ບ້ານ ມົ້ນ: ເລີ່ມແຕ່ແກ່ວຫ້ວຍ ມໍຕອມ ແລະ ຫ້ວຍມ້າ ໄຕ່ສັນຂຶ້ນໃສ່ພູຈອມກຸບ ຖ້ານໍ້າໄຫຼ່ລົງຫ້ວຍມໍຕອມແມ່ນດິນບ້ານ ມົ້ນ ຖ້ານໍ້າໄຫຼ່ລົງຫ້ວຍມ້າ ແມ່ນດິນບ້ານ ຊຽງແກນ ແທ້ນສັນພູເປັນຫຼັກ ພູຈອມກຸບລົງໃສ່ສັນຫ້ວຍຂົມເກຍ ຖ້ານໍ້າໄຫຼ່ລົງຫ້ວຍຂົມເກຍແມ່ນດິນບ້ານ ມົ້ນ ຖ້ານໍ້າໄຫຼ່ລົງຫ້ວຍກົ້ວແມ່ນດິນຊຽງແກນໄຕ່ສັນລົງຫ້ວຍຂົມເກຍແລ້ວລົງໃສ່ສົບຫ້ວຍຂົມເກຍ ສັນຫ້ວຍຂົມເກຍຖ້ານໍ້າໄຫຼ່ລົງນາບຸນເລີດແມ່ນດິນບ້ານຊຽງແກນ ຖ້ານໍ້າໄຫຼ່ລົງຫ້ວຍຂົມເກຍແມ່ນດິນບ້ານມັນ ແລ້ວເລາະຫ້ວຍຂະມອງເຂົ້າຕາມຫ້ວຍນໍ້າຮອດທາງນາໂຕດ ແລ້ວລຽນາເພັດສະວົງ ຂຶ້ນເທິງເໜືອງແລ້ວເລາະເໜືອງຂຶ້ນໃສ່ປ່າແຮ້ວ ແລ້ວຂຶ້ນຕາມນໍ້າຫ້ວຍແຮ້ວ ແລ້ວຂຶ້ນຕາມນໍ້າຫ້ວຍແຮ້ວຂຶ້ນໃສ່ລ້ອງຜາແໜນ ມີຄວາມຍາວ 3.7 ກິໂລແມັດ.

❖ **ບ້ານ ຊຽງແກນ ທິດຕາເວັນອອກ ຕິດ ບ້ານ ພຽງລຽງ:** ເລີ່ມຈາກສັນພູຜາດ່າງໄຕ່ສັນມາໃສ່ແຫ່ວຫ້າວອູ່, ລົງໃສ່ຫົວແກ່ວໂກບ ແລ້ວໄຕສັນຂຶ້ນໃສ່ສັນກາງເບົ່າເຂດນໍ້າໄຫລມາຈາກກາງເບົາແມ່ນເຂດບ້ານຊຽງແກນພ້ອມທັງປ່າຄັງ ມີຄວາມຍາວ 4.1 ກິໂລແມັດ

❖ **ບ້ານ ຊຽງແກນ ທິດຕາເວັນຕົກ ຕິດ ບ້ານ ໂພນທອງ, ບ້ານ ຕອງ:**

➢ ຕິດກັບ ບ້ານ ໂພນທອງ: ເລີ່ມຈາກຫ້ວຍໝາກຫຸ່ງ ເລາະມາໃສ່ຫ້ວຍແໜນ, ແລ້ວເລາະຂຶ້ນໄປຫາຫ້ວຍຕາດິນທາງບ້ານວັງແຊງຫ້ວຍຫ້ວຍຕຸງ ມີຄວາມຍາວ 2.5 ກິໂລແມັດ.

➢ ບ້ານ ຕອງ: ເລີ່ມຈາກແກ່ງຈະລໍ່ໄຕ່ສັນມາໃສ່ປອມໂປດ, ຖ້ານໍ້າໃຫຼໄປບ້ານຕອງແມ່ນເປັນດິນຂອງບ້ານຕອງ, ຖ້ານໍ້າໄຫຼໄປບ້ານຊຽງແກນເປັນດິນຂອງບ້ານຊຽງແກນ ມີຄວາມຍາວ 2.2 ກິໂລແມັດ

## V. ສະພາບການນໍາໃຊ້ທີ່ດິນກະສິກໍາ ແລະ ປ່າໄມ້ ໃນປັດຈຸບັນ

ສະພາບການຄຸ້ມຄອງນໍາໃຊ້ທີ່ດິນປະຈຸບັນ ຂອງບ້ານ ແມ່ນອີງຕາມ:

- ການສຶກສາສະພາບການຄຸ້ມຄອງນໍາໃຊ້ທີ່ດິນກະສິກໍາ ແລະ ປ່າໄມ້ ໃນປະຈຸບັນໂດຍນໍາໃຊ້ພາບຖ່າຍດາວທຽມ Google Earth ວັນທີ 30.03.2020 (ເພື່ອມາສົມທຽບກັບພາບທີ່ໃໝ່ກວ່າ ແຕ່ມີຄວາມລະອຽດຕໍ່າກວ່າ) ສົບທົບກັບຂໍ້ມູນເພີ່ມຕື່ມຈາກ ພາບຖ່າຍ Sentinel 2A ວັນທີ 23.04.2021, Planet NICFI ເດືອນ 03-2021. ແລະ ແຜນທີ່ພູມສັນຖານ SRTM.
- ອີງໃສ່ຂໍ້ມູນຈາກແປພາບຖ່າຍດາວທຽມແບບມີສ່ວນຮ່ວມ
- ອີງໃສ່ຂໍ້ມູນຈາກການສໍາພາດຕາມແບບຟອມ
- ສໍາລັບພື້ນທີ່ດິນປ່າໄມ້; ທີ່ດິນປູກສ້າງ ແລະ ພື້ນທີ່ອື່ນໆ ແມ່ນອີງໃສ່ການແປພາບຖ່າຍດາວທຽມ

### 5.1 ສັງລວມ ການນໍາໃຊ້ທີ່ດິນປະຈຸບັນ ຈາກການແປພາບຖ່າຍດາວທຽມແບບມີສວນຮ່ວມ

ບ້ານ ຊຽງແກນ ມີເນື້ອທີ່ທັງໝົດ 1,436.00 ເຮັກຕາ, ໃນນັ້ນທີ່ດິນກະສິກ□າມີເນື້ອທີ 216,83 ເຮັກຕາ (15.10%), ທີດິນປ່າໄມ້ມີເນື້ອທີ 1,206.77 ເຮັກຕາ (84.04%), ທີດິນປຸກສ້າງ ມີເນື້ອທີ່ 4,15 ເຮັກຕາ (0.29%), ທີ່ດິນວັດທະນະທ□າມີເນື້ອທີ່ 1,30 ເຮັກຕາ (0.09%), ທີ່ດິນໂຍທາທິການ ແລະ ຂົນສົ່ງ ເສັ້ນທາງຄົມມະນາຄົມ ມີເນື້ອທີ່ 4,44 ເຮັກຕາ (0.31%), ພື້ນທີ່ເປັນນໍ້າ ມີເນື້ອທີ່ 2,51 ເຮັກຕາ (0.17%).

**ຕາຕະລາງ04: ສະພາບການນຳໃຊ້ທີ່ດິນກະສິກຳແລະປ່າໄມ້ໃນປັດຈຸບັນບ້ານ ຊຽງແກນ.**

| ລ/ດ | | ປະເພດທີ່ດິນ | ເນື້ອທີ່ ເຮັກຕາ | ເປີເຊັນ |
|---|---|---|---|---|
| | **ລະຫັດສີ** | **ທີ່ດິນປ່າໄມ້** | **1,206.77** | 84.04 |
| 1 | 20210 | ພື້ນທີ່ປ່າເລົ່າ - ຈະບໍ່ກຳນົດລະອຽດຕື່ມອີກ | 145.91 | 10.16 |
| | 10303 | ປ່າໄມ້ປ່ອງ | 216.47 | 15.07 |
| | 10103 | ປ່າປະສົມ: ປ່າດົງດິບ-ໄມ້ພັດໃບ-ໄມ້ປ່ອງ | 844.39 | 58.80 |
| II | **ລະຫັດສີ** | **ທີ່ດິນກະສິກຳ** | **216.83** | 15.10 |
| 1 | 20101 | ພື້ນທີ່ດິນນາ | 30.72 | 2.14 |
| 2 | 20501 | ພື້ນທີ່ປູກພືດ ຮອບວຽນ 2-3 ປີ ຄົງທີ່ | 79.88 | 5.56 |
| 3 | 20212 | ພື້ນທີ່ປ່າເລົ່າ >1 ປີ | 105.37 | 7.34 |
| 4 | 30102 | ໜອງ | 0.86 | 0.06 |
| III | **ລະຫັດສີ** | **ທີ່ດິນບໍລິເວນນ້ຳ** | 2.51 | 0.17 |
| 1 | 30202 | ດິນສະຫງວນແຄມນ້ຳ | 2.51 | 0.17 |
| IV | **ລະຫັດສີ** | **ທີ່ດິນປຸກສ້າງ** | **4.15** | 0.29 |
| 1 | 40201 | ທີ່ດິນປຸກສ້າງບຸກຄົນ | 3.14 | 0.22 |
| 2 | 40401 | ທີ່ດິນປຸກສ້າງຂະຫຍາຍໃໝ່ | 1.01 | 0.07 |
| V | **ລະຫັດສີ** | **ທີ່ດິນໂຍທາທິການ ແລະ ຂົນສົ່ງ** | 4.44 | 0.31 |
| 1 | 60201 | ດິນສະຫງວນແຄມທາງ | 4.45 | 0.31 |
| VI | **ລະຫັດສີ** | **ທີ່ດິນວັດທະນະທຳ** | 1.3 | 0.09 |
| 1 | 70202 | ປ່າຊ້າ | 1.3 | 0.09 |
| **ລວມ** | | | **1,436.00** | 100.00 |

## 5.2 ການກຳນົດເຂດ, ແຜນຈັດສັນຄຸ້ມຄອງນຳໃຊ້ທີ່ດິນ ແລະ ປ່າໄມ້

### 5.2.1 ເປົ້າໝາຍລວມ

ເພື່ອເຮັດໃຫ້ການຄຸ້ມຄອງຊັບພະຍາກອນທຳມະຊາດພາຍໃນບ້ານມີປະສິດທິພາບຍິ່ງຂຶ້ນ ແລະ ມີຄວາມຍືນຍົງ, ເຮັດໃຫ້ລະບົບການການຜະລິດກະສິກຳມີຄວາມໝັ້ນທ່ຽງ ແລະ ມີສະຖຽນລະພາບຍິ່ງຂຶ້ນ ພ້ອມດ້ວຍເນັ້ນໜັກການມີສ່ວນຮ່ວມຂອງບ້ານ. ນອກຈາກນີ້, ການວາງແຜນດັ່ງກ່າວ ກໍຍັງເປັນພື້ນຖານເພື່ອກະກຽມການອອກໃບຕາດິນໃນຕໍ່ໜ້າ ພ້ອມທັງສ້າງພື້ນຖານເງື່ອນໄຂດ້ານການພັດທະນາຂອງບ້ານ.

### 5.2.2 ສັງລວມການກຳນົດເຂດຈັນສັນຄຸ້ມຄອງການນຳໃຊ້ທີ່ດິນ ແລະ ປ່າໄມ້

ແຜນຈັດສັນຄຸ້ມຄອງການນຳໃຊ້ທີ່ດິນ ແລະ ປ່າໄມ້ນີ້ ແມ່ນຖືກກຳນົດຂຶ້ນ ໂດຍອີງໃສ່ການຄົ້ນຄວ້າປຶກສາຫາ ລືກັນລະຫວ່າງຄະນະກຳມະການຄຸ້ມຄອງການນຳໃຊ້ທີ່ດິນ ແລະ ປ່າໄມ້ຂັ້ນບ້ານຮ່ວມກັບປະຊາຊົນພາຍໃນບ້ານບາງທ່ານ ຜູ້ທີ່ມີຄວາມສົນໃຈເຂົ້າຮ່ວມ ນອກຈາກນີ້, ຄະນະທີມງານວິຊາການໄດ້ອຳນວຍຄວາມສະດວກສະໜອງຂໍ້ມູນທີ່ຈຳເປັນຕ່າງໆ ເພື່ອສະໜັບສະໜູນການຕັດສິນໃຈສ້າງແຜນດັ່ງກ່າວ ໃຫ້ແທດເໝາະກັບຄວາມຕ້ອງການຂອງປະຊາຊົນ ພາຍໃນບ້ານ ແລະ ສອດຄ່ອງກັບ ແນວທາງນະໂຍບາຍຂອງລັດ.

ແຜນຈັດສັນຄຸ້ມຄອງການນຳໃຊ້ທີ່ດິນ ແລະ ປ່າໄມ້ດັ່ງກ່າວ ມີລາຍລະອຽດດັ່ງລຸ່ມນີ້:

**ຕາຕະລາງ05: ສັງລວມການນຳໃຊ້ທີ່ດິນ ອີງຕາມແຜນການຄຸ້ມຄອງນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ບ້ານ ຊຽງແກນ**

| ລະຫັດ | ປະເພດເຂດຈັດສັນຄຸ້ມຄອງການນຳໃຊ້ທີ່ດິນ | ເນື້ອທີ່ (ຮຕ) | ສ່ວນຮ້ອຍ% |
|---|---|---|---|
| | **ທີ່ດິນປ່າໄມ້** | **745.97** | **51.91** |
| Z_10101 | ປ່າຄຸ້ມຄອງນຳໃຊ້ - ທີ່ບໍ່ກຳນົດລະອຽດຕື່ມອີກ | 367.07 | 25.55 |
| Z_10201 | ປ່າສະຫງວນອະນຸລັກຂອງບ້ານ | 270.606 | 18.83 |
| Z_10301 | ປ່າຮັກສາແຫລ່ງນ້ຳ ຂອງບ້ານ | 108.292 | 7.54 |
| | **ທີ່ດິນກະສິກຳ** | **677.68** | **47.16** |
| Z_20101 | ເຂດທີ່ດິນນາ - ທີ່ບໍ່ກຳນົດລະອຽດຕື່ມອີກ | 30.721 | 2.14 |
| Z_20202 | ເຂດທົ່ງປູກຫຍ້າລ້ຽງສັດ | 75.415 | 5.25 |
| Z_20801 | ເຂດປູກພືດຄົງທີ່: ຮອບວຽນ 1-3 ປີ | 262.842 | 18.29 |
| Z_21301 | ເຂດກະສິກຳປ່າໄມ້ - ໄມ້ປ່ອງ | 308.70 | 21.48 |
| | **ທີ່ດິນປຸກສ້າງ** | **4.16** | **0.29** |
| Z_40101 | ທີ່ດິນປຸກສ້າງບຸກຄົນ | 3.141 | 0.22 |
| Z_40301 | ທີ່ດິນປຸກສ້າງຂະຫຍາຍໃໝ່ | 1.014 | 0.07 |
| | **ທີ່ດິນວັດທະນະທຳ** | **1.30** | **0.09** |
| Z_70202 | ປ່າຊ້າ | 1.3 | 0.09 |
| | **ທີ່ດິນໂຍທາທິການ ແລະ ຂົນສົ່ງ ເສັ້ນທາງ ຄົມມະນາຄົມ** | **4.435** | **0.31** |
| Z_60301 | ເຂດສະຫງວນທາງ | 4.435 | |

| | | | |
|---|---|---|---|
| | | | 0.31 |
| | **ພື້ນທີ່ເປັນນ້ຳ** | **3.37** | 0.23 |
| Z_30101 | ແມ່ນ້ຳ, ສາຍຫວ້ຍ | 2.509 | 0.17 |
| Z_30202 | ໜອງ | 0.861 | 0.06 |
| **ລວມທັງໝົດ** | | **1,436.90** | **100.00** |

**5.3 ກຳນົດເຂດທີ່ດິນກະສິກຳ**

**a. ເຂດດິນກະສິກຳຄົງທີ່**

ດິນກະສິກຳຄົງທີ່ ບ້ານ ຊຽງແກນ ມີເນື້ອທີ່ 578.31 ເຮັກຕາ ໃນນັ້ນລວມມີ: ເຂດດິນນາ, ສວນໄມ້ໃຫ້ໝາກ, ໜອງປາ, ສວນສາລີ ແລະ ພື້ນທີລ້ຽງສັດ.

**ຕາຕະລາງ06: ສັງລວມອະທິບາຍຂອບເຂດ ແລະ ການຄຸ້ມຄອງນຳໃຊ້ທີ່ດິນກະສິກຳຄົງທີ່**

| ຊື່ຂອງພື້ນທີ່ທີ່ຊາວບ້ານຈະຄຸ້ມຄອງ ແລະ ຮັກສາໄວ້ເຮັດການຜະລິດໃນແຕ່ລະປີ | ທີ່ຕັ້ງ | ເນື້ອທີ່(ຮຕ) |
|---|---|---|
| ເຂດທີ່ດິນນາ -ທີ່ບໍ່ກຳນົດລະອຽດຕື່ມອີກ | ນາກ້ອງບ້ານ, ເທິງບ້ານ | 30.721 |
| ເຂດທີ່ງປູກຫຍ້າລ້ຽງສັດ | ຫ້ວຍໂຕເດືອນ, ເຂດນາຄຳ | 75.415 |
| ເຂດປູກພືດຄົງທີ່:ພືດລົ້ມລຸກ/ປະຈຳປີ 1-3 ປີ - ທີ່ບໍ່ກ□ານົດລະອຽດຕື່ມອີກ | ແຄມບ້ານ, ແຄມນາ, ໜອງ | 262.842 |
| ເຂດໜອງລ້ຽງປາ | ແຄມບ້ານ, ແຄມນາ | 0.861 |
| ເຂດກະສິກຳປ່າໄມ້ - ປ່າໄມ້ປ່ອງ | ເຂດຫ້ວຍນາເລົ້າ,ຫ້ວຍກໍຕັງ | 308.70 |
| **ລວມ** | | **678.39** |

**5.4 ເຂດທີ່ດິນປ່າໄມ້**

ການກຳນົດ, ຈັດແບ່ງເຂດພື້ນທີ່ປ່າໄມ້ ແມ່ນຖືກກຳນົດຂຶ້ນຮ່ວມກັບຊາວບ້ານ ແລະ ຄະນະຮັບພິຊອບວຽກງານວາງແຜນນຳໃຊ້ທີ່ດິນຂັ້ນບ້ານ, ບົນພື້ນຖານຄວາມເປັນເອກກະພາບກັນຂອງປະຊາຊົນໝົດບ້ານ. ເຂດພື້ນທີ່ປ່າໄມ້ປະເພດນີ້ ແມ່ນມີຂອບເຂດຢ່າງລະອຽດ ແລະ ພື້ນທີ່ທຸກຕອນ ແມ່ນມີເອກະສານຢັ້ງຢືນເຊັ່ນ: ແຜນທີ່ການນຳໃຊ້ທີ່ດິນ, ປຶດບັນທຶກຂອບເຂດພື້ນທີ່ປ່າໄມ້ ຊຶ່ງລາຍລະອຽດຂອງຂອບເຂດພື້ນທີ່ປ່າໄມ້ແຕ່ລະຕອນມີດັ່ງລຸ່ມນີ້: *(ສ□າລັບເຂດພື້ນທີ່ສວນປູກໄມ້ອຸດສາຫະກ□າ ແລະ ພື້ນທີ່ນ້ອຍ ທີ່ບໍ່ສາມາດກ□ານົດລາຍລະອຽດກ່ຽວກັບບຶດເລົ່າຂອງຕອນດິນ)*

**ຕາຕະລາງ07: ສັງລວມອະທິບາຍຂອບເຂດ ແລະ ການຄຸ້ມຄອງນຳໃຊ້ທີ່ດິນປ່າໄມ້**

| ຊື່ຂອງພື້ນທີ່ທີ່ປະຊາຊົນຈະຄຸ້ມຄອງແລະຮັກສາໄວ້ໃຫ້ເປັນປ່າ | ທີ່ຕັ້ງ | ເນື້ອທີ່ (ha) |
|---|---|---|
| ປ່າສະຫງວນອະນຸລັກຂອງບ້ານ (ເຂດຫ້ວຍຕ່າເໜືອ, ເຂດແກ່ວກັງຄາ) | ທິດເໜືອຂອງບ້ານ | 270.606 |
| ປ່າຮັກສາແຫລ່ງນ້ຳຂອງບ້ານ (ເຂດເລົ້ານ້ອຍ, ເຂດປອມກຸບ) | ທິດຕາເວັນອອກຂອງບ້ານ | 108.292 |
| ປ່າຄຸ້ມຄອງນຳໃຊ້ຂອງບ້ານ (ເຂດຫ້ວຍຮໍາ) | ທິດຕາເວັນຕົກຂອງບ້ານ | 19.714 |
| ປ່າຄຸ້ມຄອງນຳໃຊ້ຂອງບ້ານ (ເຂດຫ້ວຍຕ່າ) | ທິດຕາເວັນອອກຂອງບ້ານ | 347.354 |
| **ລວມ** | | **745.97** |

**ແບບຟອມ: ບັນທຶກຂໍ້ມູນກ່ຽວກັບເຂດດິນປ່າໄມ້ທີ່ຊາວບ້ານກໍານົດຂອງແຕ່ລະພື້ນທີ່.**

| ລະຫັດເຂດ | 10301 | ບ້ານ: | ຊຽງແກນ | ເມືອງ: | ວຽງໄຊ | ວັນທີ່: | 10 ກັນຍາ 2021 |
|---|---|---|---|---|---|---|---|
| **1:** ຊື່ເຂດດິນປ່າໄມ້: **(**ຕາມພາສາທ້ອງຖິ່ນ) | | | | | | | |
| *ໝາຍເຫດ: ໃຫ້ຂຽນຊື່ຂອງເຂດທີ່ດິນປ່າໄມ້ ຕາມທີ່ປະຊາຊົນເອີ້ນ. ເຊິ່ງຊື່ເຂດທີ່ດິນປ່າໄມ້ ອາດໄດ້ມາຈາກ ການປະສົມປະສານລະຫວ່າງ (ກ) ຊື່ທີ່ຕັ້ງທາງພູມສາດຂອງເຂດດັ່ງກ່າວ ແລະ (ຂ) ຈຸດປະສົງເປົ້າໝາຍການນໍາໃຊ້ ເຂດດັ່ງກ່າວ* | | | | | | | |

❖ **ປ່າຊົມໃຊ້ຂອງບ້ານມີ 2 ຕອນ:**

| **ຕອນ** | **ຊື່ ເຂດທີດິນປ່າໄມ້** | **ທີຕັ້ງ** | **ເນື້ອທີ** | **ລັກສະນະລາຍລະອຽດຂອງເຂດແດນເຂດຈັດສັນດິນປ່າໄມ້ຕອນດັ່ງກ່າວ (ບົດເລົ່າ)** |
|---|---|---|---|---|
| 1 | ເຂດປອມຣ່ຳ, ຫ້ວຍເລົ້ານ້ອຍ | ທິດຕາເວັນຕົກ | 19.714 | ເລີ່ມແຕ່ຫ້ວຍເລົ່ານ້ອຍ ແລ້ວເລາະແຄມນາລົງມາໃສ່ໄຮ່ມັນຕົ້ນ ທ. ພອງມີໄຊ ແລ້ວເລາະຫ້ວຍແມນເຂົ້າໃສ່ຍອດຫ້ວຍແຂ້ວຜີ ແລ້ວຂຶ້ນໃສ່ສັນລົງແລ້ວມາໃສ່ຫ້ວຍເລົ້າໃຫ່ຍແລ້ວອອກມາໃສ່ນາຮອດຈຸດເລີ່ມຕົ້ນ. |
| 2 | ເຂດຫ້ວຍຕ້າເໜືອເທິງບ້ານ | ທິດຕາເວັນອອກ | 347.354 | ເລີ່ມແຕ່ຫ້ວຍຕ້າເໜືອເອົາຈຸດແກ່ວປ່າຄາຂຶ້ນໃສ່ສັນແຫ້ວໄຕ່ສັນແລ້ວຊື່ລົງໃສ່ຕີນແກ້ງຊາວວາຊື່ຂຶ້ນໃສ່ແກ່ວໂປດແກວຕັດຊື່ມາໃສ່ແກ່ວກໍມີແລ້ວເລາະຫ້ວຍລັບອອກມາໃສ່ຫ້ວຍຕ້າເຈົ້າແລ້ວຂຶ້ນໃສ່ແກ່ວຕ່ຳແສງທອງແລ້ວເລາະຫ້ວຍອອກມາໃສ່ຫ້ວຍງົ້ວາເລາະຫ້ວຍງົ້ວາເຂົ້າຮອດແກ້ງສູງຊື່ຂຶ້ນໃສ່ແກ່ວຍອດຫ້ວຍກໍໝາກແດງແລ້ວເລາະຫ້ວຍເຂົ້າແລ້ວຊື່ຂຶ້ນໃສ່ແກ່ວຕ່ຳຄຳຫຼ້າແລ້ວຂຶ້ນໃສ່ສັນໄຕ່ສັນໄປໃສ່ຄົງເປົ້າໄປຮອດເຂດຄຸ້ມຄອງບ້ານພຽງລຽງ |
| **ເຫດຜົນແລະຈຸດປະສົງກໍານົດເປັນເຂດປ່າຊົມໃຊ້ຂອງບ້ານ** | | **ຍ້ອນເຂດນີ້ເປັນເຂດເປັນເຂດດທີ່ປະຊາຊົນພາຍໃນບ້ານໄດ້ຊົມໃຊ້ໄມ້ ເຮັດຮົ້ວໄຮ່, ສວນ, ໄມ້ຟືນ ແລະ ເກັບເຄື່ອງປ່າຂອງດົງ(ໜໍ່ໄມ້, ເຫັດ,ຕອງ)** | | |

❖ **ປ່າປ້ອງກັນຂອງບ້ານມີ 1 ຕອນ:**

| **ຕອນ** | **ຊື່ ເຂດທີ່ດິນປ່າໄມ້** | **ທີ່ຕັ້ງ** | **ເນື້ອທີ່** | **ລັກສະນະລາຍລະອຽດຂອງເຂດແດນ ເຂດຈັດສັນດິນປ່າໄມ້ຕອນດັ່ງກ່າວ (ບົດເລົ່າ)** |
|---|---|---|---|---|
| 1 | ເຂດຫ້ວຍມ້າ | ທິດຕາເວັນອອກ | 108.292 | ເລີ່ມແຕ່ແກ່ວເຕົ້າປຸນເຂດຄຸ້ມຄອງບ້ານພຽງລຽງລົງມາຜາດ່າງນ້ອຍແລ້ວລົງມາໃສ່ສົບຫ້ວຍມ້າແລະຫ້ວຍກົ້ງືອ ແລ້ວຕັດມາໃສ່ເທິງໜອງວົງສອນແລ້ວລົງມາໃສ່ຫ້ວຍຂະມອງ ແລ້ວເລາະຫ້ວຍຂະມອງແລ້ວລຽບເຂົ້າໃສ່ສົບຫ້ວຍຂົມເກຍເຂດຄຸ້ມຄອງບ້ານມັ້ນ. |
| **ເຫດຜົນ ແລະ ຈຸດປະສົງກຳນົດເປັນເຂດປ່າປ້ອງກັນ** | | | **ເພາະວ່າເຂດນີ້ເປັນເຂດແຫຼ່ງນ້ຳຂອງບ້ານ, ໃສ່ນາ, ນ້ຳມາໃຊ້ ແລະ ປ້ອງກັນການເຊາະເຈືອນ** | |

❖ **ປ່າສະຫງວນຂອງບ້ານ ມີ 1 ຕອນ:**

| **ຕອນ** | **ຊື່ ເຂດທີ່ດິນປ່າໄມ້** | **ທີ່ຕັ້ງ** | **ເນື້ອທີ່** | **ລັກສະນະລາຍລະອຽດຂອງເຂດແດນ ເຂດຈັດສັນດິນປ່າໄມ້ຕອນດັ່ງກ່າວ (ບົດເລົ່າ)** |
|---|---|---|---|---|
| 1 | ເຂດແກ່ວກັງຄາຫ້ວຍຕ້າເໜືອ | ທິດເໜືອ | 270.606 | ເລີ່ມແຕ່ແກ່ວກັງຄາຫ້ວຍຕ້າເໜືອລົງໃສ່ຕົ້ນແກ້ງຊາວວາແລ້ວຊື່ຂື້ນໃສ່ແກ່ວໂປດແລ້ວລົງມາໃສ່ຍອດຫ້ວຍໜອງຫ່າງຊື່ມາໃສແກ່ວກໍມີແລ້ວເລາະຫ້ວຍອອກໃສ່ຫ້ວຍຕ່າເຈົ້າເລາະຫ້ວຍລົງຮອດຫ້ວຍງວາແລ້ວລຽບຫ້ວຍງວາເຂົ້າໃສ່ແກ່ວຫ້ວຍເຮ້ຍເລາະຫ້ວຍເຮ້ຍອອກໃສ່ຫ້ວຍແບ່ງແລ້ວເລາະຫ້ວຍແບ່ງເຂົ້າແລ້ວຊື່ຂື້ນໃສ່ແກ່ວຕ່ຳ ຄຳຫຼູ້າຂື້ນໃສ່ສັນແລ້ວໄຕສັນຂື້ນມາໃສ່ເຂດຄຸ້ມຄອງຫ້ວຍຕຸງໄປໃສ່ເຂດຄຸ້ມຄອງບ້ານວັງແຊງລຽບຕາມເຂດຄຸ້ມຄອງບ້ານວັງແຊງໄປໃສເຂດຄຸ້ມຄອງບ້ານໂພນທອງແລ້ວລົງໃສ່ລ້ອງຫ້ວຍຕ້າເໜືອແລ້ວຂື້ນໃສ່ແກ່ວກັງຄາຫ້ວຍຕ້າເໜືອຈຸດເລີ່ມຕົ້ນ. |
| **ເຫດຜົນແລະຈຸດປະສົງກຳນົດເປັນເຂດປ່າສະຫງວນ** | | | **ຍ້ອນວ່າຍາກສະຫງວນແນວພັນສັດ, ພືດ ແລະ ຊີວະນາໆ ພັນຂອງບ້ານ ທີ່ໃກ້ສູນພັນ** | |

❖ **ເຂດດິນກະສິກຳ ແລະ ໄມ້ປ່ອງ ມີຢູ 3 ເຂດ:**

| **ຕອນ** | **ຊື່ ເຂດທີ່ດິນປ່າໄມ້** | **ທີ່ຕັ້ງ** | **ເນື້ອທີ່** | **ລັກສະນະລາຍລະອຽດຂອງເຂດ** |
|---|---|---|---|---|

| | ປ່ອງ | | | ແດນ ເຂດຈັດສັນດິນປ່າໄມ້ຕອນດັ່ງກ່າວ (ບົດເລົ່າ) |
|---|---|---|---|---|
| 1 | ປ່າໄມ້ປ່ອງເຂດຫ້ວຍແມນ | ທິດຕາເວັນຕົກ | 29.955 | ເລີ່ມແຕ່ສົບຫ້ວຍໝາກໂຫງສວນໝາກກ້ຽງຄຳຫຼ້າລຽບຫ້ວຍແມນເຂົ້າໃສ່ຫ້ວຍແຂ້ວພີລຽບຫ້ວຍແຂ້ວພີເຂົ້າໄປຍອດຫ້ວຍຂຶ້ນໃສ່ສັນຫ້ວຍກວາງຕາຍໄຕ່ສັນຂຶ້ນໃສ່ເຂດຄຸ້ມຄອງບ້ານຕອງລົງໃສ່ປອມໂປດເໜືອລົງໃສ່ປອມໂປດໃຕ້ແລ້ວລົງໃສ່ເຂດຄຸ້ມຄອງບ້ານໂພນທອງເລາະຫ້ວຍໝາກໂຫງລົງມາໃສ່ສວນຄຳຫຼ້າ. |
| 2 | ປ່າໄມ້ປ່ອງເຂດນາຄຳ | ທິດໃຕ້ | 216.471 | ເລີ່ມແຕ່ຫ້ວຍໝາກກ່າງໄປໃສ່ຫ້ວຍໝາກງ້ຽວຂຶ້ນໃສ່ປອມຝັຣງລົງຫ້ວຍຂີ້ມເກຍໂຕ່ສັນໄຜໃສ່ຍອດຫ້ວຍມ້າເລາະຫ້ວຍມ້າອອກມາໃສ່ຫ້ວຍຂະມອງເລາະຫ້ວຍຂະມອງເຂົ້າຫ້ວຍໝູຂີລຽບຫ້ວຍໝູຂີແລ້ວຂຶ້ນໃສ່ສັນແລ້ວລົງໃສ່ເຂດນ້ຳເຂົ້າຮູລຽບຂຶ້ນໃສ່ສັນຫ້ວຍໜອງໄຊແລ້ວລຽບລົງມາຮອດໜອງປາວຽງແກ້ວແລ້ວລຽບຫ້ວຍໜອງໄຊເບື້ອງຂວາຂຶ້ນໃສ່ແກ່ວກາງປອມຫວດລົງມາໃສ່ຫ້ວຍມະກ່າງ. |
| 3 | ປ່າໄມ້ປ່ອງເຂດຫ້ວຍກໍ່ | ທິດຕາເວັນອອກ | 62.273 | ເລີ່ມແຕ່ສົບຫ້ວຍກໍ່ເລາະຂຶ້ນໃສ່ຜາໂກບເຂດຄຸ້ມຄອງບ້ານພຽງລຽງເລາະໄປຕາມເຂດຄຸ້ມຄອງບ້ານພຽງລຽງຮອດແກ່ວເຕົາປູນແລ້ວລົງມາໃສ່ຫ້ວຍຈະແຮ່ໃສ່ເທິງານວຽງສີ 100ແມັດເຫຼືອນັ້ນແມ່ນປ່າໄມ້ປ່ອງ |
| **ເຫດຜົນ ແລະ ຈຸດປະສົງກຳນົດເປັນເຂດປ່າໄມ້ປ່ອງ** | | | **ເພາະວ່າເຂດນີ້ເປັນເຂດປ່າໄມ້ປ່ອງທີ່ປະຊາຊົນໄວ້ຕັດມາໃຊ້ສອຍ, ເຮັດເຄື່ອງໃຊ້ ແລະ ຕັດຂາຍໃຫ້ບໍລິສັດ** | |

**ດິນກະສິກຳປູກພືດໝູນວຽນ.**

| ຕອນ | ຊື່ ເຂດທີ່ດິນກະສິກຳ | ທີ່ຕັ້ງ | ເນື້ອທີ່ | ລັກສະນະລາຍລະອຽດຂອງເຂດ ແດນ ເຂດຈັດສັນດິນປ່າໄມ້ຕອນດັ່ງກ່າວ (ບົດເລົ່າ) |
|---|---|---|---|---|
| 1 | ເຂດເທິງບ້ານ | ທິດຕາເວັນອອກ | 179.253 | ເລີ່ມແຕ່ຫ້ວຍຕ້າເໜືອຫ່າງຈາກທາງລົດຂຶ້ນ 160 ແມັດຂຶ້ນໃສ່ເຂດປ່າຊົມໃຊ້ແລ້ວລຽບຕາມເຂດປ່າຊົມໃຊ້ໄປຮອດເຂດຄຸ້ມຄອງບ້ານພຽງລຽງແລ້ວລົງມາໃສ່ທາງລົດໄລຍະ 200 ແມັດ ແລ້ວລຽບທາງລົດມາໃສ່ຈຸດເລີ່ມຕົ້ນ. |

| | | | | |
|---|---|---|---|---|
| 2 | ເຂດຫ້ວຍໂຕເດືອນ,ເຂດນາຄຳ | ທິດຕາເວັນຕົກ | 75.415 | ເລີ່ມແຕ່ຫ້ວຍໂຕເດືອນຂຶ້ນໃສ່ເຂດຄຸ້ມຄອງບ້ານຕອງແລ້ວໄຕ່ສັນໄປໃສ່ແກ່ວຈະຫຼໍ້ໄປໃສ່ເຂດຄຸ້ມຄອງບ້ານມົ້ນໄປຮອດທາງນາເພັດສະວົງແລ້ວຊື່ຂຶ້ນໃສ່ແກ່ວໄຂ່ທ້າວໂອ້ນແລ້ວຕັດຊື່ລົງມາໃສ່ຫ້ວຍໝາກງ້ຽວນ້ອຍຊື່ລົງມາໃສ່ລ້ອງເງືອກແລ້ວຂຶ້ນຊື່ໄປໃສ່ສັນຫ້ວຍເລົ້າໃຫ່ຍໄຕ່ສັນໄປໃສ່ແກ່ວຫ້ວຍແມນແລ້ວຊື່ຂຶ້ນໃສ່ສັນໄຕ່ສັນໄປໃສ່ຫ້ວຍໂຕເດືອນຈຸດເລີ່ມຕົ້ນ. |
| **ເຫດຜົນ ແລະ ຈຸດປະສົງກຳນົດເປັນດິນກະສິກຳ** | | | **ເພາະວ່າເຂດນີ້ເປັນເຂດປ່າໄມ້ ປປ່າເຫຼົ່າອ່ອນ) ທີ່ປະຊາຊົນເຄີຍເຮັດໄຮ, ເຮັດສວນໃສ່ ແລະ ມີແຜນປູກພືດຕ່າງໆໃສ່** | |

### 5.5 ປຽບທຽບເນື້ອທີ່ ການນາໃຊ້ທີ່ດິນກະສິກຳ ກ່ອນ ແລະ ຫຼັງ ການວາງແຜນ

ຈາກການສົມທຽບກັນລະຫວ່າງ ການນຳໃຊ້ທີ່ດິນປະຈຸບັນ ແລະ ແຜນຈັດສັນຄຸ້ມຄອງນຳໃຊ້ທີ່ດິນ ເຫັນວ່າເນື້ອທີ່ ດິນກະສິກຳ ໃນປະຈຸບັນ ມີເນື້ອທີ່ໜ້ອຍກ່ວາແຜນຈັດສັນຄຸ້ມຄອງນຳໃຊ້ທີ່ດິນ ເຊິ່ງເຫດຜົນຍ້ອນ ໃນການນຳໃຊ້ທີ່ດິນປະຈຸບັນປະຊາຊົນທຳການຜະລິດແມ່ນມີໜ້ອຍ, ບໍ່ມີການເຮັດໄຮ່ ແລະ ໄດ້ປະປ່າເຫຼົ່າໄວ້ຫຼາຍເຮັດໃຫ້ເຂດທຳການຜະລິດແມ່ນມີໜ້ອຍ, ເກືອບບໍ່ມີເລີຍ ແລະ ຫຼັງຈາກໄດ້ມີການຈັດສັນດິນວາງແຜນໃຫ້ທຳການຜະລິດເປັນລະບົບ, ກຳນົດເຂດດິນກະສິກຳແຮໄວ້ເຂດປ່າເຫຼົ່າ, ເຂດເຟີກນາ, ເຟີກໜອງປາ ທີ່ບໍ່ມີຜົນກະທົບຕໍ່ການທຳລາຍປ່າໄມ້, ແຫຼ່ງນໍ້າ ແລະ ລະບົບນິເວດ ໄດ້ກຳນົດແຮໄວ້ເປັນເຂດທຳການຜະລິດທີ່ດິນກະສິກຳເພື່ອທຳການຜະລິດການປູກ, ການລ້ຽງຫຼັງຈາກມີການວາງແຜນຈັດສັນໃຫ້ທຳການຜະລິດແບບເປັນລະບົບໄດ້ມີລະບຽບການຄຸ້ມຄອງນຳໃຊ້ທີ່ດິນຢ່າງຖືກຕ້ອງ, ຮັບປະກັນຄວາມພຽງພໍຕໍ່ຄວາມຕ້ອງ ການນຳໃຊ້ທີ່ດິນຂອງປະຊາຊົນ ແລະ ການນຳໃຊ້ໃຫ້ເກີດປະໂຫຍດສູງສຸດ.

**ຕາຕະລາງ 2: ການປຽບທຽບເນື້ອທີ່ ການນາໃຊ້ທີ່ດິນກະສິກາ ກ່ອນ ແລະ ຫຼັງ ການວາງແຜນ**

| ປະເພດທີ່ດິນ | ການນຳໃຊ້ທີ່ດິນ ປະຈຸບັນ | | ແຜນຈັດສັນຄຸ້ມຄອງນຳໃຊ້ທີ່ດິນ | |
|---|---|---|---|---|
| | ເນື້ອທີ່ (ເຮັກຕາ) | ເປີເຊັນ (%) | ເນື້ອທີ່ (ເຮັກຕາ) | ເປີເຊັນ (%) |
| ທີ່ດິນກະສິກຳ | 216.83 | 15.10% | 677.68 | 47.16% |
| ທີ່ດິນປ່າໄມ້ | 1,206.77 | 84.04% | 745.97 | 51.91% |

### 5.6 ກຳນົດເຂດການນຳໃຊ້ທີ່ດິນປະເພດອື່ນໆ

ນອກຈາກການກຳນົດເຂດທີ່ດິນກະສິກຳ ແລະ ເຂດທີ່ດິນປ່າໄມ້ແລ້ວຍັງມີເຂດທີ່ດິນປຸກສ້າງ, ດິນບໍລິເວນແຄມນໍ້າ, ເຂດດິນຄົມມະນາຄົມແລະ ທີ່ດິນປ່າຊ້າ ດັ່ງລາຍລະອຽດລຸ່ມນີ້:

**a. ເຂດທີ່ດິນປຸກສ້າງ:**

ທີ່ດິນປຸກສ້າງ ມີເນື້ອທີ່ 4.16 ເຮັກຕາ, ເປັນເປີເຊັນ (0.29%)ປະກອບມີ 2 ຕອນຄື: ເຂດທີ່ຢູ່ອາໄສປະຈຸບັນ ແລະ ທີ່ດິນແຮປຸກສ້າງ.

**b. ເຂດດິນບໍລິເວນນ້ຳ:**

ທີ່ດິນບໍລິເວນນ້ຳມີເນື້ອທີ່ທັງໝົດ 3.37 ເຮັກຕາ, ເປັນເປີເຊັນ (0.23%) ເຊິ່ງເປັນແມ່ນ□າ ແລະ ສາຍຫ້ວຍ.

**c. ເຂດດິນຄົມມະນາຄົມ:**

ເຂດດິນຄົມມະນາຄົມ (ເສັ້ນທາງດິນແດງ): ມີເນື້ອທີ່ 4.435 ເຮັກຕາ, ເປັນເປີເຊັນ ( 0.31%).

**d. ເຂດດິນປ່າຊ້າ:**

ເຂດດິນປ່າຊ້າມີເນື້ອທີ່ທັງໝົດ1.30 ເຮັກຕາ,ເປັນເປີເຊັນ (0.09%)

## 5.7 ການວາງແຜນໃນລະດັບພູມີທັດ

ໃນຂະບວນການວາງແຜນການນຳໃຊ້ທີ່ດິນ ແບບມີສ່ວນຮ່ວມຂັ້ນບ້ານ PLUP 2.0 ຄັ້ງນີ້ຄະນະກຳມະການຄຸ້ມຄອງນຳໃຊ້ທີ່ດິນ ແລະ ປ່າໄມ້ຂັ້ນບ້ານ, ປະຊາຊົນທີ່ສົນໃຈເຂົ້າຮ່ວມ ແລະ ທີມງານວິຊາການ ໄດ້ມີການຄຳນຶງເຖິງຄວາມຕໍ່ເນື່ອງ ທີ່ອາດສົ່ງຜົນສະທ້ອນເຊິ່ງກັນ ແລະ ກັນ ລະຫວ່າງຕອນເຂດຈັດສັນຄຸ້ມຄອງປະເພດຕ່າງໆ ແຕ່ລະຕອນ ເປັນຕົ້ນແມ່ນ ການກຳນົດເອົາປ່າເຂດຍອດຫ້ວຍລິນເປັນ ປ່າປ້ອງກັນຂອງບ້ານ ເນື່ອງຈາກ ຢາກມີການປົກປັກຮັກແຫຼ່ງນ້ຳ ດັ່ງກ່າວໃຫ້ສາມາດສະໜອງນ້ຳພຽງພໍ ແລະ ນຳໃຊ້ໃນໄລຍະຍາວ ພ້ອມທັງປ້ອງກັນການເຊາະເຈື່ອນຂອງດິນໃນເຂດດັ່ງກ່າວ ນອກຈາກນີ້ປະຊາຊົນພາຍໃນບ້ານຍັງໄດ້ຕົກລົງເຫັນເປັນເອກະພາບໃນການຢຸດຕິການທຳການຜະລິດຢູ່ບາງເຂດ ທີ່ຢູ່ຍອດຫ້ວຍ ຫຼື ນ້ຳ ແລະ ເຂດປ່າໄມ້ໃຫ່ຍ ຊຸກຍູ້ໃຫ້ທຳການຜະລິດ ຢູ່ຂອບເຂດທີ່ກຳນົດໄວ້ ເພື່ອການທຳການຜະລິດທີ່ເຫັນວ່າເໝາະສົມກວ່າກໍຄືຂອບເຂດປ່າເຫຼົ່າອ່ອນທີ່ເຄີຍທຳການຜະລິດໃນໄລຍະຜ່ານມາ.

ນອກຈາກນີ້, ຫຼັງຈາກການຈັດຕັ້ງປະຕິບັດວຽກວາງແຜນນຳໃຊ້ທີ່ດິນ ແບບມີສ່ວນຮ່ວມຂັ້ນບ້ານ 2.0 ໄດ້ສຳເລັດຢູ່ທຸກບ້ານເປົ້າໝາຍຂອງໂຄງການ I-GFLL ຢູ່ພາຍໃນເມືອງຈະໄດ້ມີການຈັດກອງປະຊຸມປຶກສາຫາລືລະຫວ່າງຕົວແທນ ຈາກບັນດາບ້ານເປົ້າໝາຍດັ່ງກ່າວ ກ່ຽວກັບການເຊື່ອມໂຍງການວາງແຜນຮ່ວມກັນໃນລະດັບພູມີທັດ ຫຼື ໃນລັກສະນະກຸ່ມໃຫຍ່ ໂດຍເນັ້ນໜັກ ການປັບປຸງ ແລະ ເພີ່ມທະວີຄວາມຕໍ່ເນື່ອງໃນຄຸ້ມຄອງແຜນຈັດສັນຄຸ້ມຄອງການນຳໃຊ້ທີ່ດິນ ແລະ ປ່າໄມ້ ທີ່ໄດ້ສ້າງຂຶ້ນ ລະຫວ່າງບ້ານຕໍ່ບ້ານໃຫ້ເກີດປະໂຫຍດສູງສຸດ.

## 5.8 ກ່ຽວກັບສິດການນຳໃຊ້ທີ່ດິນປະເພດຕ່າງໆພາຍໃນບ້ານ

ຈາກການສອບຖາມ ຄະນະກຳມະການຄຸ້ມຄອງການນຳໃຊ້ທີ່ດິນ ແລະ ປ່າໄມ້ ພ້ອມດ້ວຍ ປະຊາຊົນທີ່ໄດ້ເຂົ້າຮ່ວມ ເຫັນວ່າ ເຂດຈັດສັນຄຸ້ມຄອງປ່າໄມ້ປະເພດຕ່າງໆທີ່ໄດ້ລະບຸຂ້າງເທິງນັ້ນ ແມ່ນເປັນດິນລວມໝູ່ປະຊາຊົນພາຍໃນບ້ານທຸກຄົນພາຍໃນບ້ານສາມາດນຳໃຊ້ໄດ້ ໂດຍຕ້ອງເຄົາລົບກົດລະບຽບ ແລະ ແຜນການຄຸ້ມຄອງນຳໃຊ້ຕ່າງໆທີ່ໄດ້ຖືກກຳນົດໄວ້. ນອກຈາກນີ້ ເຂດທຳການຜະລິດກະສິກຳປະເພດຕ່າງໆ ເປັນຕົ້ນແມ່ນ ສວນຫຍ້າ, ພື້ນທີ່ນາ (ຍົກເວັ້ນ ນາລວມຂອງບ້ານບາງເຂດ), ສວນປູກໄມ້ຕ່າງໆ ແລະ ອື່ນໆ ທີ່ໄດ້ລະບຸໄວ້ຂ້າງເທິງ ແມ່ນ ການນຳໃຊ້ແບບສ່ວນບຸກຄົນ. ສ່ວນເຂດທີ່ໄດ້ກຳນົດໄວ້ເພື່ອແຮການບຸກເບີກເພື່ອຜະລິດໃນອະນາຄົດ ແລະ ເຂດແຮໄວ້ເພື່ອຂະ ຫຍາຍເຂດທີ່ຢູ່ອາໄສ ແມ່ນເປັນຂອງລວມບ້ານ ແລະ ຈະຖືກແບ່ງປັນເພື່ອການນຳໃຊ້ສ່ວນບຸກຄົນ ພາຍໃນບ້ານ ໂດຍອີງຕາມການສະເໜີ ແລະ ກົດລະບຽບທີ່ໄດ້ກຳນົດໄວ້.

## VI. ກົດລະບຽບບ້ານ

ກ່ອນການລົງໄປຈັດຕັ້ງປະຕິບັດການວາງແຜນນຳໃຊ້ທີ່ດິນ ແບບມີສ່ວນຮ່ວມຂັ້ນບ້ານ ຢູ່ບ້ານ ຊຽງແການ, ບ້ານດັ່ງກ່າວໄດ້ມີກົດລະບຽບຂອງບ້ານສະບັບເກົ່າ ທີ່ໄດ້ສ້າງຂຶ້ນແຕ່ດົນນານມາແລ້ວແຕ່ເນື່ອງຈາກວ່າ ຄະນະກຳມະການຄຸ້ມຄອງການນຳໃຊ້ທີ່ດິນ ແລະ ປ່າໄມ້ຂອງບ້ານ ແລະ ປະຊາຊົນທີ່ໄດ້ເຂົ້າຮ່ວມ ເຫັນວ່າກົດລະບຽບທີ່ມີຢູ່ແລ້ວເກົ່າ ແລະ ຈຳເປັນຕ້ອງໄດ້ປັບປຸງ ໃຫ້ ແທດເໝາະກັບສະພາບຄວາມເປັນຈິງໃນປະຈຸບັນ. ສະນັ້ນ, ກົດລະບຽບດັ່ງຕໍ່ໄປນີ້ ແມ່ນອີງໃສ່ກົດລະບຽບຕ່າງໆທີ່ມີຢູ່ແລ້ວ ປະກອບກັບການເພີ່ມກົດລະບຽບຕ່າງໆຂຶ້ນຕື່ມ ເພື່ອໃຫ້ສອດຄ່ອງກັບແຜນຈັດສັນຄຸ້ມຄອງທີ່ໄດ້ສ້າງຂຶ້ນມາໃໝ່ນີ້.

ການສ້າງກົດລະບຽບຂອງບ້ານຄັ້ງນີ້ ໄດ້ອີງໃສ່ການສະເໜີຈາກຄະນະກຳມະການຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂອງບ້ານເມືອງປານ ໂດຍຜ່ານການຕົກລົງເຫັນດີ ເປັນເອກະພາບຂອງ ປະຊາຊົນພາຍໃນບ້ານ.

ເນື້ອໃນຕ່າງໆຂອງກົດລະບຽບດັ່ງກ່າວ ແມ່ນມີດັ່ງນີ້:

## VII. ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ.

ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງການນຳໃຊ້ທີ່ດິນຂັ້ນບ້ານ ເພື່ອໃຫ້ແຜນການດັ່ງ ກ່າວຖືກຈັດຕັ້ງປະຈັດຕັ້ງປະຕິບັດໄປຕາມແຜນທີ່ວາງໄວ້ໃຫ້ມີປະສິດທິຜົນ, ດັ່ງນັ້ນ, ຄະນະກຳມະການຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ໂດຍການຊີ້ນຳຂອງ ອຳນາດການປົກຄອງເມືອງ ແລະ ບ້ານ ຕ້ອງໄດ້ເຮັດໜ້າທີ່ເປັນຜູ້ຊີ້ນຳ-ນຳພາ ຈັດຕັ້ງປະຕິບັດແຜນໃຫ້ສອດຄ່ອງກັບ ຂອບເຂດສິດ ແລະ ໜ້າທີ່ທີ່ໄດ້ກຳນົດໄວ້ ແລະ ກົດລະບຽບບ້ານ ທີ່ໄດ້ຖືກສ້າງຂຶ້ນ.

## VIII. ຂໍ້ສະເໜີ.

ເມື່ອພາຍຫຼັງສຳເລັດ ວຽກງານການວາງແຜນນຳໃຊ້ທີ່ດິນ ແລະ ປ່າໄມ້ ແບບມີສ່ວນຮ່ວມແລ້ວ ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ເຊັ່ນ: ຫ້ອງການກະສິກຳ ແລະ ປ່າໄມ້ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ລົງມາຊ່ວຍບ້ານວາງແຜນ ຄຸ້ມຄອງປ່າໄມ້ບ້ານ ພ້ອມທັງ ສ້າງແຜນການລົງທືນກິດຈະກຳກະສິກຳແບບຍົງຍືນໂດຍບໍ່ທຳລາຍປ່າໄມ້ໃຫ້ລະອຽດ ແລະ ເປັນລະບົບລະບຽບ ແລະ ໃຫ້ເກີດປະໂຫຍດສູງສຸດ ການນຳຄຸ້ມຄອງ-ນຳໃຊ້ ແລະ ພັດທະນາໃນອະນາຄົດ.

## IX. ພາກສະຫຼຸບ.

ຜ່ານການລົງຈັດສັນການວາງແຜນການນຳໃຊ້ທີດິນແບບມີສ່ວນຮ່ວມຂັ້ນບ້ານ (PLUP 2.0) ຢູ່ ບ້ານ ຊຽງແການ ເມືອງວຽງໄຊ ແຂວງຫົວພັນ ສາມາດສະຫຼຸບໄດ້ດັ່ງນີ້: ເນື້ອທີດິນຂອງບ້ານມີທັງໝົດ 1,436.90 ເຮັກຕາ. ໃນນັ້ນມີເນື້ອທີດິນປ່າໄມ້ທັງໝົດ 745.97 ເຮັກຕາ, ເນື້ອທີດິນກະສິກຳ 677.68 ເຮັກຕາ, ດິນປຸກສ້າງ 4.16 ເຮັກຕາ, ດິນຄົມມະນາຄົມ 4.35 ເຮັກຕາ, ດິນບໍລິເວນນ້ຳ 3.37 ເຮັກຕາ.

ຈາກຜົນຂອງການລົງຈັດສັນການວາງແຜນການນຳໃຊ້ທີດິນແບບມີສ່ວນຮ່ວມຂັ້ນບ້ານ (PLUP2.0) ຢູ່ຊຽງແການ ເມືອງວຽງໄຊ ແຂວງຫົວພັນ ໃນຄັ້ງນີ້ສາມາດກຳນົດເຂດຄຸ້ມຄອງລະຫວ່າງບ້ານຕໍ່ບ້ານ, ລົງສຳຫຼວດພື້ນທີຕົວຈິງທີຕິດກັບ ບ້ານ ຊຽງແການ ໄດ້ຢ່າງສຳເລັດ ແລະ ກຳນົດທີດິນ 3 ປະເພດປ່າໄມ້, ດິນກະສິກຳ (ເຂດປູກ, ເຂດລ້ຽງ) ໄດ້ຢ່າງຈະແຈ້ງ ແລະ ປະຊາຊົນໄດ້ມີການຍອມຮັບຕໍ່ວຽກງານດັ່ງກ່າວ ນອກນັ້ນທາງທີມງານຍັງສາມາດສ້າງແຜນທີການນຳໃຊ້ທີດິນປະຈຸບັນ, ສ້າງແຜນທີການນຳໃຊ້ທີດິນໃນອະນາຄົດ ແລະ ໄດ້ສາມາດໄດ້ຮູ້ເຖິງທ່າແຮງຂອງບ້ານ ຜ່ານການເຮັດວຽກຕົວຈິງໃນຄັ້ງນີ້ສາມາດເຫັນໄດ້ເຖິງດ້ານສະດວກ ແລະ ຫຍຸ້ງຍາກຄື:

❖ **ຂໍ້ສະດວກ**

- ໄດ້ຮັບທິດຊີ້ນຳຈາກການນຳເມືອງ, ຫົວໜ້າຫ້ອງການທີກ່ຽວຂ້ອງເປັນຢ່າງດີ, ທີມງານວິຊາການໄດ້ຝຶກອົບຮົມກ່ອນການລົງຈັດຕັ້ງປະຕິບັດວຽກງານການວາງແຜນການນຳໃຊ້ທີດິນ
- ອຳນາດນາດການປົກຄອງບ້ານ, ຊາວບ້ານ ໄດ້ໃຫ້ການຮ່ວມມືໃນການວາງແຜນ ການນຳໃຊ້ທີດິນເປັນຢ່າງດີ.

❖ **ຂໍ້ສະດວກ**

- ໄດ້ຮັບທິດຊີ້ນຳຈາກການນຳເມືອງ, ຫົວໜ້າຫ້ອງການທີ່ກ່ຽວຂ້ອງເປັນຢ່າງດີ, ທີມງານວິຊາການໄດ້ຝຶກອົບຮົມກ່ອນການລົງຈັດຕັ້ງປະຕິບັດວຽກງານການວາງແຜນການນຳໃຊ້ທີ່ດິນ
- ອຳນາດນາດການປົກຄອງບ້ານ, ຊາວບ້ານ ໄດ້ໃຫ້ການຮ່ວມມືໃນການວາງແຜນ ການນຳໃຊ້ທີ່ດິນເປັນຢ່າງດີ.

❖ **ຂໍ້ຫຍຸ້ງຍາກ**

- ສະເໜີໃຫ້ໃດງການມີອຸປະກອນຮັບໃຊ້ພາກສະໜາມໃຫ້ວິຊາການ ເປັນຕົ້ນ ໂນດບຸກ, GPS, LCD, ກ້ອງຖ່າຍຮູບ, ຮາດດິດເກັບຂໍ້ມູນ.

ທີ່ບ້ານ ຊຽງແກນ, ວັນທີ 15..ກັນຍາ2021

ນາຍບ້ານ ຊຽງແກນ

ຕາງໜ້າຄະນະກຳມະການຄຸ້ມຄອງທີ່ດິນຂັ້ນບ້ານ

ວຽງພອນ ແສນມະນີ

ທ. ວັນໄຊ.

ຢັ້ງຢືນ

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ

ຢັ້ງຢືນ

ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ

ວົງທອງ ພົນມີໄຊ

ອ່ອນໄຊ ແພງທະສອນ

สแกนด้วย CamScanner

❖ **<u>ສຳເລັດວັນທີ:</u> 12 ກັນຍາ 2021**

❖ **<u>ມອບໃຫ້ພາກສ່ວນລະ 1 ສະບັບ:</u>**

- ແຂວງ: ຂະແໜງປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ແຂວງ ຫົວພັນ
- ແຂວງ: ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ ຫົວພັນ
- ແຂວງ: ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ ວຽງໄຊ
- ເມືອງ: ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ ວຽງໄຊ
- ເມືອງ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ ວຽງໄຊ
- ບ້ານ: ເມືອງ ຊຽງແກນ

**ເອກະສານຊ້ອນທ້າຍ**

- ຂໍ້ຕົກລົງຮັບຮອງເອົາຄະນະຈັດສັນທີດິນຂັ້ນບ້ານ
- ບົດບັນທຶກເຂດຄຸ້ມຄອງ ລະຫວ່າງບ້ານຕໍ່ບ້ານ
- ລະບຽບ ວ່າດ້ວຍການຄຸ້ມຄອງ-ນໍາໃຊ້ທີ່ດິນ ແລະ ປ່າໄມ້ຂອງບ້ານ
- ແຜນທີ່ ອ້າງອີງເຂດຄຸ້ມຄອງ ຂອງບ້ານ
- ແຜນທີ່ ການຄຸ້ມຄອງ-ນໍາໃຊ້ທີ່ດິນ ແລະ ປ່າໄມ້ ປະຈຸບັນ ຂອງບ້ານ
- ແຜນທີ່ ການຄຸ້ມຄອງ-ນໍາໃຊ້ທີ່ດິນ ແລະ ປ່າໄມ້  ອະນາຄົດ ຂອງບ້ານ
- ຟອມ01 ຮ່າງຂໍ້ມູນທົ່ວໄປໂດຍຫຍໍ້ຂອງບ້ານ
- ຟອມ02 ຮ່າງສໍາມະໂນບັນຫາ
- ຟອມ03 ຮ່າງການຂະຫຍາຍຕົວຂອງປະຊາກອນການນໍາໃຊ້ທີ່ດິນແລະປ່າໄມ້
- ຟອມ04 ຮ່າງຟອມສໍາຫຼວດພາກສະໜາມ